International
Labour
Office

# ເດີນທາງແບບສະຫຼາດ - ເຮັດວຽກແບບສະຫຼາດ
# ຄູ່ມື "ສະຫຼາດ" ສຳລັບຜູ້ອອກແຮງງານລາວຢູ່ໃນປະເທດໄທ.



ຄູ່ມືສະບັບນີ້ເປັນສ່ວນໜຶ່ງຂອງການໂຄສະນາ ເພື່ອສົ່ງເສີມການເຄື່ອນຍ້າຍທີ່ປອດໄພ ແລະ ເພື່ອປ້ອງກັນການ ຄ້າມະນຸດ ແລະ ການຂູດຮີດແຮງງານຢູ່ໃນຂົງເຂດລຸ່ມແມ່ນ້ຳຂອງ .

ເຈົ້າກຳລັງເຮັດວຽກຢູ່ປະເທດໄທບໍ? ຫຼື ເຈົ້າວາງແຜນທີ່ຈະໄປເຮັດວຽກຢູ່ທີ່ນັ້ນ?
ເຈົ້າເຮັດວຽກຢ່າງຖືກກົດໝາຍບໍ? ຫຼື ຜິດກົດໝາຍ?



ຂໍ້ມູນໃນປຶ້ມຫົວນີ້ ແມ່ນມີຄວາມສຳຄັນຕໍ່ຄວາມປອດໄພຂອງເຈົ້າ ແລະ ຮັບປະກັນວ່າປະສົບການຕ່າງໆຂອງເຈົ້າຈະເປັນຜົນດີ ແລະ ມີປະໂຫຍດຕໍ່ເຈົ້າເອງ ແລະ ຄອບຄົວຂອງເຈົ້າ!

ບໍ່ວ່າເຈົ້າຈະຢູ່ໃສ ແລະ ສະຖານະການຂອງເຈົ້າຈະເປັນແນວໃດ
(‘ຖືກກົດໝາຍ’ ຫຼື ‘ຜິດກົດໝາຍ’) ເຈົ້າກໍ່ຄວນຈະອ່ານຂໍ້ແນະນຳຕ່າງໆດັ່ງຕໍ່ໄປນີ້.

ບຸກຄົນທີ່ດີທີ່ສຸດທີ່ຈະຄອຍດູແລຜົນປະໂຫຍດຂອງເຈົ້າ ນັ້ນກໍຄື ຕົວເຈົ້າເອງ!

ດັ່ງນັ້ນ ຈົ່ງເດີນທາງແບບສະຫຼາດ - ເຮັດວຽກແບບສະຫຼາດ!

## ຄວາມຈິງທີ່ສຳຄັນຕໍ່ຜູ້ອອກແຮງງານເຄື່ອນຍ້າຍມາເຮັດວຽກຢູ່ໃນປະເທດໄທ (ນະໂຍບາຍຂອງລັດຖະບານແຫ່ງລາດຊະອານາຈັກໄທ)

1. ຜູ້ອອກແຮງງານທຸກຄົນຕ້ອງຮູ້ວ່າ ການເຂົ້າປະເທດໄທດ້ວຍການໃຊ້ໜັງສືເດີນທາງ ແລະ ວີຊາທີ່ໝົດອາຍຸ ນັ້ນ ພາຍໃຕ້ກົດໝາຍຂອງປະເທດໄທແລ້ວຖືວ່າຜິດກົດໝາຍແລະຈະນຳໄປສູ່ການປັບໃໝ, ການຈຳຄຸກ ຫຼື ທັງຈຳ ທັງປັບໃໝພ້ອມກັນ.

2. ຜູ້ອອກແຮງງານ ທຸກຄົນຕ້ອງຮູ້ວ່າ ການເຮັດວຽກຢູ່ປະເທດໄທໂດຍທີ່ບໍ່ມີໃບອະນຸຍາດເຮັດວຽກນັ້ນຖືວ່າ ຜິດກົດໝາຍ, ຊຶ່ງບຸກຄົນດັ່ງກ່າວຈະຖືກຈັບ, ປັບໃໝ, ຈຳຄຸກ ຫຼື ທັງຈຳ ແລະ ປັບໃໝພ້ອມກັນ.

3. ຜູ້ອອກແຮງງານ ຕ້ອງບໍ່ຫຼົງເຊື່ອບຸກຄົນທີ່ມາຊັກຊວນເພື່ອໄປເຮັດວຽກຢູ່ປະເທດໄທໂດຍຄວາມຄິດທີ່ວ່າ ຈະສາມາດລົງທະບຽນໂດຍຖືກກົດໝາຍເມື່ອໄປຮອດແລ້ວ, ຊຶ່ງຄຳຊັກຊວນດັ່ງກ່າວແມ່ນບໍ່ເປັນຄວາມຈິງ ແລະ ຜູ້ແຮງງານ ເອງທີ່ຈະຕ້ອງຮັບຜິດຊອບຕໍ່ຄວາມຜິດດັ່ງກ່າວ.

4. ລັດຖະບານແຫ່ງລາດຊະອານາຈັກໄທໄດ້ເຊັນຂໍ້ຕົກລົງ ( ບັນທຶກຄວາມເຂົ້າໃຈ) ກັບລັດຖະບານ ສປປ ລາວ, ກຳ ປູເຈຍ ແລະ ມຽນມ້າເພື່ອເຮັດໃຫ້ຜູ້ອອກແຮງງານຈາກປະເທດເຫຼົ່ານີ້ສາມາດເດີນທາງມາເຮັດວຽກຢູ່ປະເທດໄທຢ່າງຖືກກົດໝາຍ, ລັດຖະບານຂອງທັງ 3 ປະເທດເຫຼົ່ານີ້ໄດ້ແກ້ໄຂກົດລະບຽບພາຍໃນຂອງຕົນເອງເພື່ອອະນຸຍາດໃຫ້ ຜູ້ອອກແຮງງານເດີນທາງໄປເຮັດວຽກຢູ່ປະເທດໄທ. ເພາະສະນັ້ນ, ຖ້າຫາກຜູ້ອອກແຮງງານຜູ້ໃດຕ້ອງການທີ່ຈະມາເຮັດວຽກຢູ່ປະເທດໄທນັ້ນ ພວກເຂົາຄວນຈະຕິດຕໍ່ກະຊວງແຮງງານ ສະຫວັດດີການສັງຄົມຢູ່ໃນປະເທດຂອງຕົນເອງ **ເສຍກ່ອນ** ກ່ອນທີ່ຈະເດີນທາງເຂົ້າປະເທດໄທ.

# ເປັນຫຍັງຂ້ອຍຕ້ອງກ່ຽວຂ້ອງ?

ໃນແຕ່ລະມື້ມີຄົນໜຸ່ມສາວ-ຄືກັບເຈົ້າ-ເປັນພັນໆຄົນຈາກບ້ານຈາກເຮືອນເພື່ອໄປເຮັດວຽກເຮັດງານຢູ່ບ້ານອື່ນເມືອງອື່ນ. ພວກເຂົາເຫຼົ່ານັ້ນແມ່ນໄດ້ຂ້າມຊາຍແດນເພື່ອໄປຍັງປະເທດເພື່ອນບ້ານ ມີບາງຄົນກໍ່ບໍ່ມີບັນຫາຫຍັງ ທີ່ຈະຫາເງິນເພື່ອໃຊ້ຈ່າຍສຳລັບຕົວເອງ ແລະ ສົ່ງໃຫ້ທາງບ້ານ ແຕ່ບາງຄົນຕ້ອງຖືກນາຍຈ້າງຮ້າຍດ່າ, ລໍ້ລວງໃຫ້ເຮັດວຽກທີ່ເຂົາເຈົ້າບໍ່ຕ້ອງການ, ບາງຄົນກໍບໍ່ໄດ້ຮັບຄ່າຈ້າງ ແລະ ໃນບາງກໍລະນີກໍຖືກກັກຂັງໜ່ວງໜ່ຽວ ບໍ່ສາມາດຕິດຕໍ່ຈາກໂລກພາຍນອກເພື່ອຂໍຄວາມຊ່ວຍເຫຼືອໄດ້.

ສ່ວນໃຫຍ່ບຸກຄົນເຫຼົ່ານັ້ນ ແມ່ນຖືກບັງຂັບ ຫຼື ຫຼອກລວງຈາກ-ນາຍໜ້າ ຫຼື ຕົວແທນຊອກຫາງານ- ແລະ ບາງເທື່ອ ກໍມີຍາດພີ່ນ້ອງ ແລະ ໝູ່ເພື່ອນຂອງຕົວເອງກໍ່ມີສ່ວນຮ່ວມນຳ. ພວກເຂົາຈະຖືກຫຼອກລວງວ່າມີວຽກລໍຢູ່ແລ້ວ ແລະ ບາງເທື່ອກໍ່ຈະຖືກ "ຂາຍ" ໃຫ້ນາຍຈ້າງເພື່ອໄດ້ຄ່ານາຍໜ້າ. ແຕ່ວ່າສ່ວນໃຫຍ່ແລ້ວມີພຽງແຕ່ຜູ້ດຽວທີ່ມີສ່ວນຮ່ວມ - ນາຍຈ້າງໃໝ່ - ທີ່ສະເໜີວຽກໃຫ້ພວກເຂົານັ້ນແມ່ນພຽງແຕ່ເພື່ອຫາຜົນປະໂຫຍດຈາກສະຖານະການຄວາມບໍ່ແນ່ນອນ ຂອງຜູ້ອອກແຮງງານເຫຼົ່ານັ້ນ.

ໃນແຕ່ລະເຫດການນັ້ນ, ເອີ້ນວ່າການຄ້າມະນຸດ ແລະ ມັນແມ່ນອາດຊະຍາກຳ.



ນາຍຈ້າງທຸກຄົນແມ່ນມີສິດ ແລະ ອຳນາດເໜືອລູກຈ້າງ. ຜູ້ອອກແຮງງານຜູ້ໃດບໍ່ມີໃບອະນຸຍາດໃນການເຮັດວຽກ ກໍ່ຈະຖືກນາຍຈ້າງປະຕິບັດບໍ່ດີນຳ ເຊັ່ນວ່າ - ບໍ່ຈ່າຍຄ່າຈ້າງ, ໃຫ້ເຮັດວຽກໜັກ, ຖືກລວນລາມທາງເພດ, ຫຼື ຖືກທາລຸນຈາກ ນາຍຈ້າງ ແລະ ຜູ້ອື່ນອີກ.
ຢ່າງໃດກໍດີນາຍຈ້າງສ່ວນໃຫຍ່ກໍ່ມີຄວາມເປັນທຳແລະໃຈດີ. ບາງຄົນກໍຊ່ວຍຜູ້ອອກແຮງງານເຄື່ອນຍ້າຍທີ່ຍັງເປັນໜຸ່ມເປັນສາວ ໃຫ້ຫຼຸດພົ້ນອອກຈາກການສະແຫວງຫາຜົນປະໂຫຍດ ເພາະວ່າເຂົາເຈົ້າຮູ້ຈັກກັບຜູ້ອອກແຮງງານ - ໂດຍສະເພາະແມ່ນຜູ້ທີ່ບໍ່ມີໃບອະນຸຍາດການເຮັດວຽກ - ແມ່ນຢ້ານການຕິດຕາມຂອງເຈົ້າໜ້າທີ່ເຖິງການປະຕິບັດທີ່ ບໍ່ດີຂອງຕົນຕໍ່ ລູກຈ້າງ.

ສິ່ງເຫຼົ່ານີ້ແມ່ນເກີດຂຶ້ນທຸກໆມື້ ແລະ ມັນສາມາດເກີດຂຶ້ນກັບເຈົ້າໄດ້.

ແຕ່ວ່າເຈົ້າສາມາດຫຼີກລ້ຽງການກົດຂີ່ຂົ່ມເຫັງເຫຼົ່ານີ້ໂດຍມີການວາງແຜນລ່ວງໜ້າ - ດ້ວຍການໃຊ້ສາມັນສຳນຶກງ່າຍໆ. ເຖິງ ແມ່ນວ່າເຈົ້າກຳລັງຕົກຢູ່ໃນ ສະຖານະການດັ່ງກ່າວກໍ່ຕາມ, ປື້ມເຫຼັ້ມນີ້ ໄດ້ສະເໜີຄຳແນະນຳຕ່າງໆກ່ຽວກັບສະຖານທີ່ທີ່ ເຈົ້າຈະຕ້ອງໄປຂໍຄວາມຊ່ວຍເຫຼືອ.

## ການວາງແຜນລ່ວງໜ້າ

### ການເຮັດວຽກຢ່າງຖືກກົດໝາຍຢູ່ໃນປະເທດໄທ:

ມີທາງດຽວທີ່ຜູ້ເຂົ້າເມືອງຈາກປະເທດ **ກຳປູເຈຍ, ລາວ ແລະ ພະມ້າ** (ມຽນມ້າ) ທີ່ຈະສາມາດເຮັດວຽກຢູ່ ປະເທດໄທຢ່າງຖືກກົດໝາຍ.

ຂັ້ນຕອນທຳອິດເຈົ້າຕ້ອງຜ່ານກະຊວງແຮງງານ ແລະ ສະຫວັດດີການສັງຄົມທີ່ປະເທດຂອງເຈົ້າ **ກ່ອນ**ທີ່ຈະຂ້າມຊາຍແດນເຂົ້າເມືອງໄທ. ຝ່າຍໄທໄດ້ມີຂໍ້ຕົກລົງທີ່ຖືກຕ້ອງກັບລັດຖະບານຂອງບັນດາປະເທດດັ່ງກ່າວ ໃນການຮັບເອົາແຮງງານຈາກປະເທດເຫລົ່ານີ້ ແລະ ທາງປະເທດໄທເອງກໍ່ໄດ້ແຈ້ງຕໍ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມຂອງປະເທດດັ່ງກ່າວເປັນແຕ່ລະໄລຍະເພື່ອປະກາດຮັບເອົາ ບຸກຄົນທີ່ຕ້ອງການໄປເຮັດວຽກຢູ່ປະເທດໄທ (ເຊັ່ນ: ດ້ານການປະມົງ, ໂຮງຈັກໂຮງງານ, ການກໍ່ສ້າງ ແລະ ການກະເສດ). ການສະເໜີຮັບເອົາແຮງງານນີ້ກໍ່ຕໍ່ເມື່ອນາຍຈ້າງບໍ່ສາມາດຫາແຮງງານທີ່ເປັນຄົນໄທພຽງພໍກັບຕຳແໜ່ງງານດັ່ງກ່າວ.

ແຕ່ວ່າຄວາມຮັບຜິດຊອບກໍ່ຍັງເປັນໂຕເຈົ້າເອງ – ຜູ້ທີ່ຈະເດີນທາງເຂົ້າປະເທດ – ຕ້ອງສອບຖາມເຖິງຕຳແໜ່ງງານທີ່ ວ່າງຢູ່ປະເທດໄທ ກັບທາງກົມແຮງງານຢູ່ປະເທດຂອງເຈົ້າກ່ອນ **ກ່ອນ** ທີ່ເຈົ້າຈະເດີນທາງອອກຈາກປະເທດ. ທຳອິດເຈົ້າໜ້າທີ່ຢູ່ປະເທດຂອງເຈົ້າຕ້ອງ ຮັບຮອງສະຖານະພາບຂອງເຈົ້າ ແລະ ອອກໜັງສືເດີນທາງ, ເອກະສານໃນການເດີນທາງຕ່າງໆ ທີ່ທາງເຈົ້າໜ້າທີ່ຝ່າຍໄທຕ້ອງການ ໃຫ້ແກ່ເຈົ້າ. **ທາງເຈົ້າໜ້າທີ່ຢູ່ປະເທດຂອງເຈົ້າຕ້ອງມອບເອກະສານທີ່ສາມາດຢັ້ງຢືນໄດ້ວ່າ ເຈົ້າເປັນຄົນໜຶ່ງຢູ່ໃນໂກຕາ ທີ່ຈະ ຖືກສົ່ງໄປເຮັດວຽກຢູ່ປະເທດໄທ, ເພື່ອຕອບສະໜອງຄວາມ ຕ້ອງການທາງດ້ານແຮງງານຂອງ ລັດຖະບານແຫ່ງລາຊະອານາຈັກໄທ**. ຫຼັງຈາກທ່ານເດີນທາງມາ ເຖິງປະເທດໄທແລ້ວ ເຈົ້າຈະໄດ້ວີຊາເປັນເວລາ 2 ປີ ແລະ ທາງເຈົ້າ ໜ້າທີ່ຝ່າຍໄທກໍ່ຈະຈັດຫານາຍຈ້າງໃຫ້ ກັບ ເຈົ້າ ຈາກນັ້ນເຈົ້າກໍ່ຈະໄດ້ຮັບໃບອະນຸຍາດເຮັດວຽກ, ກວດສຸຂະພາບ ແລະ ເຈົ້າກໍ່ຈະໄດ້ຮັບການປະກັນໄພສຸຂະພາບ. ຈົ່ງຮັບຮູ້ໄວ້ວ່ານາຍໜ້າ ຫຼື ນາຍຈ້າງທີ່ເປັນຄົນໄທຈະເປັນຜູ້ຈ່າຍຄ່າສະໝັກ, ໃບອະນຸຍາດເຮັດວຽກ ແລະ ປະກັນໄພໃຫ້ເຈົ້າ ຫຼັງຈາກນັ້ນນາຍຈ້າງຈະພະຍາຍາມຫັກຄ່າ ໃຊ້ຈ່າຍຕ່າງໆຈາກຄ່າຈ້າງຂອງເຈົ້າ. ດັ່ງນັ້ນ ເຈົ້າຕ້ອງໃຫ້ຖາມກ່ອນລ່ວງໜ້າກ່ຽວກັບເລື້ອງນີ້, ຖາມກ່ອນວ່າ

ລາຄາທີ່ຕ້ອງຈ່າຍທໍ່ໃດ? ແລະ ຕ້ອງໄດ້ຮັບຄຳຕອບຄ່າໃຊ້ຈ່າຍຕ່າງໆເປັນລາຍລັກອັກສອນ ຈາກນາຍຈ້າງສາກ່ອນ!.

ຜູ້ທີ່ເດີນທາງເຂົ້າເມືອງທີ່ໄດ້ລົງທະບຽນແລ້ວ ແລະກຳລັງເຮັດວຽກຢູ່ປະເທດໄທຢ່າງຖືກກົດໝາຍ - ອາດຈະສາມາດຕໍ່ອາຍຸໃບອະນຸຍາດ ເຮັດວຽກ ແລະ ຕໍ່ວີຊາຫຼັງຈາກວັນໝົດອາຍຸ. ເພື່ອເຮັດແນວນັ້ນ, ເຈົ້າຕ້ອງ ບອກໃຫ້ນາຍຈ້າງຂອງຕົນພາໄປກົມການຈ້າງງານ ບ່ອນທີ່ອອກໃບສະໝັກ ແລະ ຕໍ່ອາຍຸບັດກັບເຈົ້າ. ຖ້າໄດ້ຮັບ ອະນຸຍາດແລ້ວ ກໍ່ຈະຕໍ່ອາຍຸໃຫ້ອີກ 1 ປີ, ກ່ອນການສະເໜີຂໍຕໍ່ອາຍຸນັ້ນ, ລູກຈ້າງ ຫຼື ຜູ້ອອກ ແຮງງານຕ້ອງຜ່ານການ ກວດສຸຂະພາບອີກເທື່ອໃໝ່ ແລະ ຕ້ອງມີການຂໍການປະກັນໄພສຸຂະພາບ. (ລັດຖະບານໄທຈະພິຈາລະນາການຕໍ່ ອາຍຸໃບອະນຸຍາດການເຮັດວຽກເປັນປີຕໍ່ປີ) . ຜູ້ອອກແຮງງານຕ້ອງສະເໜີຕໍ່ **ກ່ອນ**ທີ່ໃບອະນຸຍາດຂອງຕົນໝົດອາຍຸ ບໍ່ດັ່ງນັ້ນ ທາງເຈົ້າໜ້າທີ່ ຈະບໍ່ຕໍ່ໃຫ້ ແລະ ເຈົ້າກໍ່ຈະໝົດສິດທີ່ຈະເຮັດວຽກຢູ່ໃນປະເທດໄທ .

ໃນອະດີດ , ທາງຝ່າຍໄທໄດ້ໃຫ້ຜູ້ທີ່ເຂົ້າເມືອງຜິດກົດໝາຍທີ່ເຮັດວຽກຢູ່ປະເທດໄທແລ້ວ ແຕ່ບໍ່ມີໃບອະນຸຍາດເຮັດວຽກ ໃຫ້ໄປລົງທະບຽນ ແຕ່ປັດຈຸບັນທາງລັດຖະບານແຫ່ງລາຊະອານາຈັກໄທໄດ້ປະກາດແລ້ວວ່າໃນອະນາຄົດແມ່ນບໍ່ມີແຜນທີ່ຈະເຮັດເຊັ່ນນັ້ນ.

ຂັ້ນຕອນຕ່າງໆຂ້າງເທິງນີ້ແມ່ນເປັນຫົນທາງດຽວທີ່ຖືກກົດໝາຍ ແລະ ວ່ອງໄວໃນການທີ່ຈະເດີນທາງມາເຮັດວຽກ ຢູ່ປະເທດໄທສຳລັບຄົນຕ່າງປະເທດ. ໃນເມື່ອເຈົ້າຈະຕ້ອງເຮັດວຽກຢູ່ໃນປະເທດໄທຢ່າງຖືກຕ້ອງຕາມກົດໝາຍ ແລະເຈົ້າຈະມີຄວາມສ່ຽງໜ້ອຍຕໍ່ການຖືກທາລຸນ, ຖືກຈັບກຸມ ແລະ ຖືກເນລະເທດອອກຈາກປະເທດ ແລະ ເຈົ້າ ຍັງມີ ຄວາມສ່ຽງໜ້ອຍຕໍ່ການຖືກກົດຂີ່ຂູດຮີດຈາກນາຍຈ້າງບາງຄົນ .

***ຖ້າເຈົ້າບໍ່ເຮັດຕາມຂັ້ນຕອນຕ່າງໆເຫຼົ່ານີ້ເຈົ້າຈະຖືກເອົາລັດເອົາປຽບງ່າຍດາຍກວ່າຜູ້ທີ່ເຮັດຕາມຂັ້ນຕອນນີ້ຈາກນາຍຈ້າງ ແລະ ຜູ້ອື່ນໆ!***

## ຢູ່ຢ່າງປອດໄພ!

ຜູ້ລັກລອບເຂົ້າເມືອງທີ່ຈົດທະບຽນ ຫຼື ບໍ່ໄດ້ຈົດທະບຽນ - ຄວນຈື່ ສະເໜີດັ່ງນີ້ :
ໃຫ້ສິ່ງໃສ:

* ຕໍ່ທຸກຄົນທີ່ໃຫ້ຄວາມຊ່ວຍເຫຼືອແກ່ເຈົ້າໃຫ້ຄຳໝັ້ນສັນຍາວ່າມີ "ວຽກຈ່າຍເງິນດີ", ເຂົາອາດຈະຕົວະເຈົ້າ ແລະ ເຂົາອາດຈະເຮັດວຽກໃຫ້ກັບຄົນທີ່ບໍ່ດີ ຫຼື ພວກແມ່ເລົ້າ, ແມງດາ ຊຶ່ງບຸກຄົນເຫຼົ່ານີ້ຈະບັງຄັບໃຫ້ເຈົ້າເຮັດວຽກ ໂດຍທີ່ບໍ່ໄດ້ຮັບຄ່າຈ້າງ ຫຼື ໄດ້ນ້ອຍ ແລະ ກີດກັນເຈົ້າບໍ່ໃຫ້ໄດ້ຮັບຄວາມຊ່ວຍເຫຼືອ

* ຕໍ່ ທຸກຄົນ ທີ່ຈະຊ່ວຍເຈົ້າໃນການຂ້າມແດນ ຫຼື ຕົກລົງທີ່ຈະແນະນຳເຈົ້າຕໍ່ນາຍຈ້າງ ຫຼື ນາຍໜ້າ ຫາງານພາຍໃນ ຫຼື ຕ່າງປະເທດ ຊຶ່ງບຸກຄົນດັ່ງກ່າວອາດຈະໄດ້ຄ່ານາຍໜ້າ ເຈົ້າກໍ່ອາດຈະຕົກເປັນ ຈຳເລີຍຂອງນາຍຈ້າງໃໝ່ ແລະ ຖືກບັງຄັບໃຫ້ຈ່າຍເງິນຄືນທັງໝົດໃຫ້ກັບນາຍຈ້າງໃໝ່, ໂດຍທີ່ ເຈົ້າຈະຕ້ອງເຮັດວຽກໂດຍທີ່ບໍ່ໄດ້ຮັບເງິນເດືອນ ຫຼື ໄດ້ຮັບເງິນເດືອນນ້ອຍ ເປັນເວລາຫຼາຍເດືອນ ຫຼື ເປັນປີ

* ຕໍ່ ທຸກຄົນ ທີ່ເປັນນາຍໜ້າ ຫຼື ນາຍຈ້າງທີ່ຕ້ອງການເກັບຮັກສາໜັງສືເດີນທາງ ຫຼື ບັດປະຈຳຕົວ ຂອງເຈົ້າຊຶ່ງຈະ ເຮັດໃຫ້ເຈົ້າມີຄວາມສ່ຽງ ແລະ ກາຍເປັນຕົວປະກັນໂດຍປະລິຍາຍ ເພາະວ່າ ເຈົ້າຕ້ອງ ການເອກະສານດັ່ງກ່າວ ໃນການເດີນທາງກັບບ້ານ. ຢ່າຝາກໜັງສືເດີນທາງ ຫຼື ບັດປະຈຳຕົວໄວ້ກັບນາຍໜ້າ ຫຼື ນາຍຈ້າງເດັດຂາດ ເຖິງແມ່ນເຂົາຈະ ບອກວ່າຈະຮັກສາໄວ້ໃຫ້ ເພື່ອຄວາມປອດໄພ. ໜັງສືເດີນທາງ, ສັນຍາໃນການເຮັດວຽກ ແລະ ບັດປະຈຳຕົວ ເປັນຊັບສິນ ບັດສ່ວນຕົວອັນລ້ຳຄ່າຂອງເຈົ້າ

* ຕໍ່ ທຸກຄົນ ທີ່ກີດກັນເຈົ້າໃນການຕິດຕໍ່ພົວພັນຫາໝູ່ຄູ່ ຫຼື ຄອບຄົວຫຼັງຈາກເດີນທາງຮອດ ຈຸດໝາຍປາຍທາງແລ້ວ

## 1. ຄວນຮູ້ສິ່ງຕ່າງໆດັ່ງລຸ່ມນີ້!



*** ໜັງສືເດີນທາງ:**
ໜັງສືເດີນທາງແມ່ນເອກະສານທາງການທີ່ອະນຸຍາດ ໃຫ້ປະຊາກອນເດີນທາງໄປ ປະເທດຕ່າງໆລວມທັງປະເທດໄທໄດ້. ໃຫ້ອັດສຳເນົາໜັງສືເດີນທາງ, ໃບອະນຸຍາດເຮັດວຽກ, ເອກະສານລົງທະບຽນ ແລະ ບັດປະຈຳຕົວ ໃຫ້ເກັບຮັກສາ ເອກະສານເຫຼົ່ານີ້ໃນທີ່ສ່ວນຕົວ ແລະ ຮັກສາ ຫຼື ສົ່ງສຳເນົາດັ່ງກ່າວໃຫ້ຄອບຄົວຂອງເຈົ້າ. ໃຫ້ໂທຫາສະຖານທູດຂອງເຈົ້າໃນກໍລະນີໜັງສືເດີນທາງເສຍ/ຖືກລັກ.



*** ການລົງທະບຽນຜູ້ເຂົ້າເມືອງ:**
ເລື້ອງນີ້ແມ່ນເຮັດຢູ່ປະເທດຂອງເຈົ້າຊຶ່ງເຈົ້າໜ້າທີ່ ຈະຕ້ອງຮັບຮອງສະຖານະພາບຂອງ ເຈົ້າ ແລະ ກະກຽມໜັງສືເດີນທາງ ແລະ ເອກະສານຕ່າງໆທີ່ບົ່ງບອກວ່າເຈົ້າກຳລັງຈະເດີນທາງໄປປະເທດໄທ ຕາມໂກຕາ ທີ່ທາງປະເທດໄທໄດ້ຮ້ອງຂໍມາຍັງລັດຖະບານປະເທດຂອງເຈົ້າ. ຫຼັງຈາກນັ້ນທາງເຈົ້າໜ້າທີ່ຝ່າຍໄທຈະໃຫ້ເອກະສານໃນການລົງ ທະບຽນ, ໃບອະນຸຍາດເຮັດວຽກ ແລະ ກະກຽມການປະກັນໄພສຸຂະພາບໃຫ້ແກ່ເຈົ້າ, ຖ້າຫາກເຈົ້າບໍ່ໄດ້ ລົງທະບຽນ ກໍ່ຈະຖືກຈັບ, ເຂົ້າຄຸກ ແລະ ເນລະເທດອອກປະເທດ. ນາຍຈ້າງບາງຄົນຈະປະຕິເສດການຈ້າງງານຜູ້ທີ່ມີການລົງທະບຽນຢ່າງຖືກຕ້ອງ ເພື່ອຈະໄດ້ຈ້າງບຸກຄົນທີ່ລັກ ລອບເຂົ້າເມືອງ "ຜິດກົດໝາຍ" ເພື່ອການງ່າຍຕໍ່ການເອົາປຽບໃນການໃຊ້ງານ. ນາຍຈ້າງສາມາດຂູ່ເຂັນວ່າ ຈະນຳລູກຈ້າງທີ່ບໍ່ໄດ້ລົງທະບຽນໄປສົ່ງໃຫ້ຕຳຫຼວດ ແລະ ບໍ່ຈ່າຍຄ່າຈ້າງ ແລະ ປະຕິເສດສິດທິຂໍອອກຈາກບ່ອນເຮັດວຽກ, ບາງຄົນກໍຈະຖືກທາລຸນທາງເພດ ແລະ ທາງຮ່າງກາຍ. ຜູ້ເຮັດວຽກເປັນແມ່ບ້ານກໍ່ຖືກເອົາລັດເອົາປຽບຄ້າຍ ຄືກັນ.



*** ຊອກຮູ້ຫຼາຍເທົ່າທີ່ຈະຫຼາຍໄດ້ກ່ຽວສະຖານທີ່ທີ່ຈະໄປ/ກັບນາຍຈ້າງ .** ເປັນສະຖານທີ່ທີ່ປອດໄພບໍ? ເຄີຍມີຊື່ສຽງທີ່ບໍ່ດີກ່ຽວກັບການເອົາລັດເອົາປຽບບໍ່ຕໍ່ຜູ້ທີ່ຫຼົບໜີເຂົ້າເມືອງ? ສະຖານທູດ ຫຼື ສະຖານກົງສູນ) ຂອງເຈົ້າຢູ່ໃນປະເທດໄທຢູ່ໃສ? ແລະເບີໂທລະສັບແມ່ນຫຍັງ? ທ່ານມີໝູ່ ຫຼືຄົນຮູ້ຈັກ ທີ່ເຈົ້າສາມາດຂໍ ຄວາມຊ່ວຍເຫຼືອໄດ້ເມື່ອເຈົ້າຕ້ອງການ ຢູ່ໃກ້ກັນບໍ? ຈາກບ່ອນນັ້ນເຈົ້າຮູ້ຈັກທາງກັບຄືນບ້ານບໍ ?



*** ຢືນຢັນການສະເໜີການຈ້າງງານ** ( ຖ້າເປັນໄປໄດ້ ໃຫ້ບຸກຄົນມາຢືນຢັນການຈ້າງງານຄັກແນ່) ຖ້າວ່າມີຜູ້ໃດຜູ້ໜຶ່ງ ຈ່າຍຄ່າເດີນທາງໃຫ້ເຈົ້າໃຫ້ຖາມເຂົາເຈົ້າວ່າ ເຈົ້າ ຕ້ອງຈ່າຍຄືນໃຫ້ເຂົາບໍ? ຖ້າເຈົ້າຕ້ອງຈ່າຍຄືນຕ້ອງຮູ້ລ່ວງໜ້າວ່າຕ້ອງຈ່າຍທໍ່ໃດ, ຕ້ອງຈ່າຍຄ່າດອກເບ້ຍບໍ? ແລະ ໃຊ້ເວລາດົນປານໃດໃນການ ຈ່າຍແທນຄືນ? ແລະ <u>ໃຫ້ຂຽນບັນທຶກເປັນລາຍລັກອັກສອນ</u> . ໃຫ້ແນ່ໃຈ ວ່າການເດີນທາງຂອງເຈົ້າຈະບໍ່ຖືກຈຳ ກັດຈາກນາຍຈ້າງຄົນໃໝ່ ແລະ ບໍ່ໃຫ້ເອົາ ເອກະສານການເດີນທາງ ແລະ ເອກະສານໃນການເຮັດວຽກ ຕ່າງໆໃຫ້ເຂົາເກັບໄວ້. ໃນໜຶ່ງ ອາທິດມີມື້ພັກບໍ? ຈະໄດ້ຮັບອະນຸຍາດໃຫ້ອອກຈາກສະຖານທີ່ທີ່ເຮັດວຽກບໍ່ ໃນເມື່ອບໍ່ມີວຽກ.? ທຸກຢ່າງຕ້ອງບັນທຶກເປັນລາຍລັກອັກສອນແລ້ວ ສົ່ງສຳເນົາໃຫ້ທາງຄອບຄົວຂອງເຈົ້າເກັບໄວ້ .



*** ໃຫ້ບອກຄອບຄົວ** ຊື່, ເບີໂທລະສັບ ແລະ ທີ່ຢູ່ຂອງນາຍຈ້າງ ແລະ **ໃຫ້ຕິດຕໍ່ຄອບຄົວຕະຫຼອດຫຼັງຈາກເຈົ້າມາຮອດສະຖານ**ທີ່ເຮັດວຽກ. ໃຫ້ຕົກລົງວ່າ ຖ້າຄອບຄົວບໍ່ໄດ້ຮັບຂ່າວຈາກເຈົ້າໃນເວລາອັນ ສົມຄວນໃຫ້ ຂໍຄວາມຊ່ວຍເຫຼືອ (ຊື່ຜູ້ຕິດຕໍ່/ເບີໂທລະສັບຢູ່ຂ້າງ ຫຼັງປື້ມ) - ໃຫ້ສັນຍາກັບເຂົາເຈົ້າເພື່ອຕິດຕໍ່ຄອບຄົວຂອງທ່ານ!

*** ພວກເຮົາບາງຄັ້ງກໍ່ໄຮ້ດຽງສາ - ແຕ່ຕ້ອງຈຳໄວ້ວ່າ**



ຖ້າວ່າການສະເໜີວຽກງານມັນດີເກີນໄປທີ່ຈະເປັນຄວາມຈິງນັ້ນ ບາງທີແມ່ນວຽກທີ່ຜິດກົດໝາຍ - ໝູ່ເພື່ອນເຈົ້າເອງກໍ່ສາມາດຫຼອກລວງເຈົ້າໄດ້ ແລະ ສຸດທ້າຍເຈົ້າກໍ່ຕ້ອງມາເຮັດວຽກທີ່ເຈົ້າໄດ້ຄ່າຈ້າງນ້ອຍ ຫຼື ບໍ່ໄດ້ຮັບຄ່າຈ້າງເລີຍ - ກາຍເປັນທາດ - ຊຶ່ງບໍ່ມີໃຜຊ່ວຍເຈົ້າ!

## 2.ຫຼຸດຜ່ອນຄວາມສ່ຽງໃນຄະນະທີ່ເດີນທາງແລະໃນສະຖານທີ່ທີ່ເປັນຈຸດໝາຍປາຍທາງ:



*** ຢ່າເຊື່ອຄົນແປກໜ້າ!**
ເຖິງຈະເປັນກັນເອງກໍ່ຕາມ - ບໍ່ວ່າຜູ້ຊາຍ ຫຼື ຜູ້ຍິງ. ຄືດັ່ງທີ່ເຄີຍໄດ້ຍິນມາ, ມີຄົນໜຸ່ມສາວຫຼາຍຄົນທີ່ຫຼົງເຊື່ອບຸກຄົນທີ່ຕົນໄດ້ພົບໃນລະຫວ່າງການເດີນທາງ ແຕ່ສຸດທ້າຍບຸກຄົນເຫຼົ່ານັ້ນຫັກຫຼັງ. ສ່ວນໃຫຍ່ແມ່ນຜູ້ຍິງທີ່ຖືກຫຼອກລວງເຖິງແມ່ນວ່າຢູ່ໃນຮູບຈະເປັນຜູ້ຊາຍພະຍາຍາມເວົ້າຈາເຂົ້າຫາຜູ້ຍິງຢູ່ໃນລົດເມ, ແຕ່ກໍ່ມີຫຼາຍຄັ້ງທີ່ຜູ້ຄ້າມະນຸດເປັນຜູ້ຍິງ !



*** ຊອກຮູ້ສິ່ງອ້ອມຂ້າງດ້ວຍຕົວເອງ** ລະຫວ່າງການເດີນທາງ ແລະ ເມື່ອເຈົ້າເດີນທາງຮອດແລ້ວ, ໃຫ້ຖາມທາງກັບບຸກຄົນທີ່ເຈົ້າເຊື່ອໃຈເທົ່ານັ້ນ. ໃຫ້ສ້າງຄວາມຄຸ້ນ ເຄີຍກັບສິ່ງອ້ອມຂ້າງ, ຖ້າເຈົ້າຮູ້ສຶກບໍ່ດີກໍ່ໃຫ້ເຊື່ອສັນຊາດຕະຍານຂອງເຈົ້າ ແລ້ວໃຫ້ເດີນທາງອອກໜີ ໃຫ້ຊອກຫາສະຖານທີ່ໃກ້ຄຽງເຊັ່ນ: ວັດ, ສະຖານີຕຳຫຼວດ ຫຼື ໂຮງໝໍ ສະຖານທີ່ເຫຼົ່ານີ້ເປັນສະຖານທີ່ທີ່ປອດໄພ ຖ້າຫາກເຈົ້າຕ້ອງການໜີຈາກນາຍຈ້າງ ຫຼື ບຸກ ຄົນທີ່ທາລຸນ. ຢ່າຝາກໜັງສືເດີນທາງ ຫຼື ບັດປະຈຳຕົວໄວ້ກັບຄົນອື່ນ ສິ່ງນີ້ເປັນຊັບສົມບັດອັນລ້ຳຄ່າຂອງເຈົ້າ ສະນັ້ນ ຕ້ອງໄວ້ກັບຕົວທ່ານຕະຫຼອດເວລາ

*** ຢ່າເຊື່ອນາຍຈ້າງທີ່ບອກວ່າສາມາດລົງທະບຽນໃຫ້ແກ່ເຈົ້າໄດ້ !**
ນາຍຈ້າງບໍ່ມີສິດທີ່ຈະລົງທະບຽນໃຫ້ແກ່ເຈົ້າ ກັບເຈົ້າໜ້າທີ່ຝ່າຍໄທໄດ້, ຊຶ່ງເຈົ້າຕ້ອງໄດ້ເຮັດຢູ່ໃນປະເທດຂອງເຈົ້າເອງ ກ່ອນທີ່ເຈົ້າຈະເດີນທາງ ແລະ ຕ້ອງປະຕິບັດຕາມຂັ້ນຕອນຕ່າງໆທີ່ກ່າວມາຂ້າງເທິງນີ້, ແຕ່ວ່າ, ຖ້າເຈົ້າໄດ້ລົງທະບຽນຢ່າງຖືກຕ້ອງຕາມກົດໝາຍກັບນາຍຈ້າງຄົນ ປະຈຸບັນຂອງເຈົ້າແລ້ວ ແລະ ໃບອະນຸຍາດເຮັດວຽກຂອງເຈົ້າໝົດອາຍຸ ອັນນີ້ນາຍຈ້າງຂອງເຈົ້າອາດຈະສາມາດ ຊ່ວຍເຈົ້າໃນການຕໍ່ອາຍຸໄດ້ .

ການໂທກັບບ້ານ: ຖ້າເຈົ້າອາໃສຢູ່ຕ່າງປະເທດ ແລະ ຕ້ອງການໂທກັບບ້ານ ກ່ອນອື່ນເຈົ້າຕ້ອງກົດລະຫັດຕ່າງປະເທດ <ຈາກປະເທດໄທ ກົດ – 001> ຈາກນັ້ນ ລະຫັດປະເທດ <855 ສຳລັບກຳປູເຈຍ > <856 ສຳລັບປະເທດລາວ > <95 ສຳລັບພະມ້າ /ມຽນມ້າ > ຈາກນັ້ນກົດລະຫັດທ້ອງຖິ່ນ ແລະ ເບີໂທລະສັບ

## 3. *ສິດທິຂອງເຈົ້າໃນຖານະຜູ້ອອກແຮງງານຢູ່ໃນປະເທດໄທ:*

## *สิทธิ์ของแรงงานต่างด้าวที่ทำงานในประเทศไทย:*

ໃນຖານະເປັນແຮງງານເຄື່ອນຍ້າຍທີ່ເຮັດວຽກຢູ່ **ໂຮງຈັກໂຮງງານ** ( ລວມທັງໂຮງງານ ແລະ ກຳມະວິທີໃນການປຸງແຕ່ງອາຫານທະເລ) ເຈົ້າຈະໄດ້ຮັບສິດຈາກ ກົດໝາຍປ້ອງກັນແຮງງານເທົ່າທຽມກັນກັບຜູ້ອອກແຮງງານໄທ , ຊຶ່ງລວມມີສິ່ງຕ່າງໆດັ່ງຕໍ່ໄປນີ້ :

หากคุณเป็นแรงงานต่างด้าวที่ทำงานใน**ภาคการผลิต** (รวมถึงโรงงานอุตสาหกรรมและการแปรรูปอาหารทะเล) คุณมีสิทธิ์จะได้รับความคุ้มครองตามกฎหมายคุ้มครองแรงงานเช่นเดียวกับแรงงานไทย ซึ่งความคุ้มครองที่ได้รวมถึงสิ่งต่อไปนี้ด้วย

* **ຄ່າຈ້າງຂັ້ນຕ່ຳ** ໃນປະເທດໄທແມ່ນ 143 ບາດຕໍ່ມື້, ແຕ່ວ່າຢູ່ເກືອບທຸກເຂດຂອງປະເທດໄທແມ່ນມີອັດຕາຄ່າຈ້າງ ທີ່ສູງກວ່າ ແລະ ກໍ່ຈະແຕກຕ່າງກັນຢູ່ໃນແຕ່ລະແຂວງ (ຢູ່ກຸງເທບ ແລະ ແຂວງອ້ອມຂ້າງທັງ 5 ແຂວງແມ່ນມີຄ່າ ຈ້າງຂັ້ນຕ່ຳ 191 ບາດ) ທັງຜູ້ອອກແຮງງານຕ່າງດ້າວ ແລະ ຜູ້ອອກແຮງງານໄທແມ່ນໄດ້ຮັບຄ່າຈ້າງຂັ້ນຕ່ຳເທົ່າທຽມກັນ. ຖ້າເຈົ້າ ຕົກລົງທີ່ຈະເຮັດວຽກຫຼາຍກວ່າ 8 ຊົ່ວໂມງ ຕໍ່ມື້ ເຈົ້າກໍ່ໄດ້ຄ່າຈ້າງ ລ່ວງເວລາທີ່ສູງກວ່າ.

* **ค่าจ้างขั้นต่ำ**ในประเทศไทยคือ 143 บาทต่อวัน แต่ในพื้นที่ส่วนใหญ่ของประเทศค่าจ้างขั้นต่ำจะสูงกว่านี้ (เช่นที่กรุงเทพฯ ค่าจ้างขั้นต่ำ = 191 บาท) ทั้งแรงงานต่างด้าวและแรงงานไทยมีสิทธิ์ที่จะได้รับค่าจ้างขั้นต่ำ หากคุณตกลงที่จะทำงานเกินวันละ 8 ชั่วโมง คุณมีสิทธิ์ได้รับค่าล่วงเวลาซึ่งมีอัตราสูงกว่าค่าจ้างในเวลา

* **ມື້ເຮັດວຽກປົກກະຕິຕ້ອງບໍ່ກາຍ 8 ຊົ່ວໂມງ.** ສູງສຸດແມ່ນ 48 ຊົ່ວໂມງຕໍ່ອາທິດ. ໃນວຽກ ທີ່ມີຄວາມສ່ຽງ ແລະ ອັນຕະລາຍ ຊົ່ວໂມງເຮັດວຽກຕ້ອງບໍ່ກາຍ 7 ຊົ່ວໂມງ ຕໍ່ມື້ ຫຼື 42 ຊົ່ວໂມງຕໍ່ອາທິດ ຖ້າເຈົ້າ ຕົກລົງທີ່ຈະເຮັດ ວຽກເກີນຊົ່ວໂມງເຮັດວຽກປົກກະຕິ , ນາຍຈ້າງຂອງເຈົ້າຕ້ອງຈ່າຍເງິນຄ່າລ່ວງເວລາ (1.5 ເທົ່າຂອງຄ່າຈ້າງ ປົກກະຕິ) ຊຶ່ງບໍ່ສາມາດບັງຄັບເຈົ້າໃຫ້ເຮັດວຽກເກີນຊົ່ວໂມງເຮັດວຽກປົກກະຕິໄດ້ .

* **วันทำงานปกติหนึ่งวันจะต้องไม่เกิน 8 ชั่วโมง** ในหนึ่งอาทิตย์จะสามารถทำงานได้มากสุด 48 ชั่วโมง  สำหรับงานอันตรายเวลาทำงานต้องไม่เกินวันละ 7 ชั่วโมงหรืออาทิตย์ละไม่เกิน 42 ชั่วโมง ถ้าคุณสมัครใจที่จะทำงานเกินกว่าชั่วโมงที่กล่าวไว้ นายจ้างของคุณจะต้องจ่ายค่าจ้างล่วงเวลาให้คุณ (1.5 เท่าของค่าจ้างปกติของคุณ) ไม่มีใครสามารถบังคับให้คุณทำงานเกินเวลาทำงานปกติที่ระบุไว้ข้างต้นได้

* **ເຈົ້າຕ້ອງມີເວລາພັກຜ່ອນ** ຊຶ່ງບໍ່ນ້ອຍກວ່າ 1 ຊົ່ວໂມງຕໍ່ມື້ ແລະ ເວລາພັກຜ່ອນຕ້ອງພັກຫຼັງຈາກເຈົ້າໄດ້ເລີ້ມ ເຮັດວຽກໄດ້ 5 ຊົ່ວໂມງ.

* **คุณจะต้องมีเวลาหยุดพัก**ไม่ต่ำกว่า 1 ชั่วโมงต่อวัน และไม่อนุญาตให้ทำงานติดต่อกันเกิน 5 ชั่วโมงโดยไม่ได้พัก

* **ເຈົ້າຕ້ອງໄດ້ມີມື້ພັກຢ່າງນ້ອຍ 1 ມື້ ຕໍ່ອາທິດ** ເຈົ້າມີສິດປະຕິເສດທີ່ຈະບໍ່ເຮັດວຽກໃນມື້ພັກຂອງເຈົ້າ, ຖ້າເຈົ້າ ຕົກລົງທີ່ຈະເຮັດວຽກໃນມື້ພັກຂອງເຈົ້າ , ນາຍຈ້າງຕ້ອງຈ່າຍຄ່າຂ້າງເປັນ 2 ເທົ່າຂອງຄ່າຈ້າງປົກກະຕິ. ສໍາລັບມື້ ພັກປະຈໍາອາທິດຂອງເຈົ້າຕ້ອງຕົກລົງກັນກັບນາຍຈ້າງຂອງເຈົ້າເອງ ແລະ ສາມາດປ່ຽນແປງໄດ້ໃນ ແຕ່ລະ ອາທິດ.

* **คุณจะต้องมีวันหยุดอาทิตย์ละอย่างน้อย 1 วัน** คุณมีสิทธิ์ปฏิเสธไม่ทำงานในวันหยุดของคุณได้ หากคุณยินยอมทำงานในวันหยุด นายจ้างของคุณจะต้องจ่ายค่าจ้าง**สองเท่า**ที่คุณได้รับในเวลางานปกติให้คุณ คุณสามารถตกลงกำหนดวันหยุดประจำอาทิตย์กับนายจ้างของคุณได้และอาจไม่ใช่วันเดียวกันในทุกอาทิตย์ก็ได้

* **ເຈົ້າຕ້ອງໄດ້ມີມື້ພັກບໍ່ນ້ອຍກວ່າ 13 ວັນຕໍ່ປີ** (ມື້ພັກທາງການຂອງປະເທດໄທ) ເຈົ້າສາມາດປະຕິເສດການ ເຮັດວຽກຢູ່ໃນມື້ພັກທາງການຂອງປະເທດໄທ. ຖ້າເຈົ້າເຮັດວຽກຢູ່ໃນມື້ດັ່ງກ່າວເຈົ້າ**ຕ້ອງໄດ້ຮັບຄ່າຈ້າງລ່ວງເວລາ ເປັນ 2 ເທົ່າຂອງມື້ເຮັດວຽກປົກກະຕິ** ແລະ ຖ້າເຈົ້າເຮັດວຽກເກີນ 8 ຊົ່ວໂມງໃນມື້ພັກ ເຈົ້າຕ້ອງໄດ້ຮັບຄ່າຈ້າງ ເປັນ **3 ເທົ່າຕໍ່ຊົ່ວໂມງຂອງຊົ່ວໂມງເຮັດວຽກປົກກະຕິ**.

* **คุณจะต้องได้รับวันหยุดประจำปีไม่น้อยกว่าปีละ 13 วัน** (ตามวันหยุดเทศกาลของไทย) คุณมีสิทธิ์ปฏิเสธไม่ทำงานในวันหยุดเทศกาลไทยได้ หากคุณทำงานในวันหยุดเทศกาลคุณต้องได้รับค่าจ้างล่วงเวลา**เป็นสองเท่าของค่าจ้างวันทำงานปกติ** และต้องได้รับ**สามเท่าของค่าจ้างรายชั่วโมง**จากเวลาทำงานปกติหากต้องทำงานเกิน 8 ชั่วโมงในวันนั้น

* **ເຈົ້າມີສິດລາພັກໃນເວລາເຈັບເປັນ** ຕາມກົດລະບຽບຂອງການເຈັບເປັນ ສຳລັບການລາປ່ວຍ ແມ່ນ 3 ມື້ຂອງມື້ ເຮັດວຽກ ຫຼືຫຼາຍ ກວ່ານັ້ນ ເຈົ້າຕ້ອງເອົາໃບຢັ້ງຢືນການປິ່ນປົວຈາກແພດທີ່ລົງ ທະບຽນ ( ຈາກໂຮງໝໍ ) ເຈົ້າມີສິດທີ່ຈະໄດ້ຮັບລາຍໄດ້ຢູ່ໃນຊ່ວງທີ່ເຈົ້າບໍ່ສະບາຍຈາກນາຍຈ້າງ ຫຼື ຈາກປະກັນໄພ ຂອງບຸກຄົນຕ່າງດ້າວ ( ສູງສຸດ 30 ວັນ ).

* **คุณมีสิทธิ์ที่จะลาป่วย**ได้ตามสภาพการเจ็บป่วย หากลาป่วยตั้งแต่ 3 วันขึ้นไป คุณต้องมีใบรับรองจากแพทย์ปริญญา (เช่น หมอที่โรงพยาบาล) คุณยังมีสิทธิ์ที่จะได้รับเงินจากนายจ้างหรือจากประกันแรงงานต่างด้าวในช่วงที่ลาป่วยนี้ (สูงสุด 30 วัน)

* **ຖ້າເຈົ້າຢຸດ ຫຼື ຖືກໄລ່ອອກຈາກວຽກ** ເຈົ້າມີເວລາ 7 ມື້ທີ່ຈະຊອກຫານາຍຈ້າງໃໝ່ກ່ອນ ທີ່ເຈົ້າຈະຕ້ອງອອກ ຈາກປະເທດໄທ ເຖິງແມ່ນວ່າເຈົ້າສາມາດຊອກນາຍຈ້າງໃໝ່ທີ່ຕ້ອງການ ແຮງງານຕ່າງດ້າວພາຍໃຕ້ໂກຕາຂອງ ແຮງງານຕ່າງດ້າວໄດ້ , ເຈົ້າກໍ່ອາດຈະຕ້ອງໄດ້ກັບປະເທດ ຂອງເຈົ້າກ່ອນ ແລະ ເຮັດວີຊາໃໝ່.

* **ถ้าคุณลาออกจากงาน ถูกไล่ออก** คุณมีเวลา 7 วันที่จะหางานใหม่ หากหาไม่ได้ภายในเวลานี้ คุณต้องเดินทางออกจากประเทศไทย แม้ว่าคุณจะสามารถหางานใหม่ได้กับนายจ้างที่ต้องการแรงงานจากโควต้าแรงงานต่างด้าว คุณก็อาจจะยังต้องออกนอกประเทศไปก่อนแล้วค่อยใช้วีซ่าใหม่เดินทางกลับเข้ามาอีกครั้ง

## ໝາຍເຫດພິເສດສຳລັບຜູ້ອອກແຮງງານເຄື່ອນຍ້າຍທີ່ເປັນຜູ້ຍິງ:
## สิทธิ์สำหรับแรงงานต่างด้าวที่เป็นหญิง:

* **ຜູ້ອອກແຮງງານທີ່ເປັນຜູ້ຍິງທຸກຄົນ** ມີສິດທີ່ຈະໄດ້ຮັບຄ່າຈ້າງຄືກັບແຮງງານຊາຍທີ່ເຮັດວຽກຄືກັນ, ນາຍຈ້າງເອງກໍ່ມີສິດທີ່ ຈະວາງອັດຕາຄ່າຈ້າງໂດຍອີງຕາມການເຮັດວຽກຂອງແຕ່ລະຄົນ ແຕ່ບໍ່ແມ່ນອີງຕາມເພດຍິງ ຫຼື ເພດຊາຍ ແລະ ຕ້ອງບໍ່ຈ່າຍນ້ອຍກວ່າອັດຕາຄ່າຈ້າງຂັ້ນຕ່ຳ.

* **แรงงานข้ามชาติที่เป็นหญิง**มีสิทธิ์ได้รับค่าแรงเท่ากับแรงงานข้ามชาติที่เป็นชายซึ่งทำงานในหน้าที่เดียวกัน นายจ้างจะต้องให้ค่าแรงตามความสามารถของลูกจ้างตราบใดที่งานนั้นไม่ได้เป็นงานที่กำหนดให้เฉพาะหญิงหรือชายทำ

* **ຜູ້ອອກແຮງງານທີ່ຖືພາ** ຄວນຈະໄດ້ຮັບສິດທິໃນການລາພັກເກີດລູກບໍ່ເກີນ 90 ວັນ ໃນນັ້ນ 45 ວັນແມ່ນ ໄດ້ຮັບຄ່າຈ້າງຈາກນາຍຈ້າງ.

* **แรงงานต่างด้าวที่ตั้งท้อง**มีสิทธิ์ที่จะลาคลอดไม่เกิน 90 วันและมีสิทธิ์ได้รับค่าตอบแทนจากนายจ้างเป็นเวลา 45 วัน

* **ຖ້າຫາກວຽກອັນຕະລາຍ ຫຼື ມີຄວາມຫຍຸ້ງຍາກດ້ານຮ່າງກາຍລະຫວ່າງ ແລະ ຫຼັງການຖືພາ**, ຈິ່ງໄດ້ຮັບການ ຢືນຢັນທາງດ້ານການແພດ ຈາກທ່ານໝໍທີ່ລະບຸວ່າເຈົ້າບໍ່ສາມາດສືບຕໍ່ເຮັດວຽກໄດ້, ເຈົ້າກໍ່ຄວນຈະມີສິດສະເໜີປ່ຽນໜ້າວຽກໄດ້ຊົ່ວຄາວກ່ອນ ແລະ ຫຼັງເກີດລູກ.

* **หากงานที่ทำเป็นงานอันตรายหรือไม่เหมาะสมที่จะทำเนื่องจากสภาพของร่างกายทั้งระหว่างและหลังช่วงที่ตั้งท้อง** คุณสามารถนำใบรับรองของแพทย์ที่ระบุว่าคุณไม่สามารถจะทำงานเดิมที่ทำอยู่ได้ไปแสดงเพื่อขอเปลี่ยนงานเป็นการชั่วคราวก่อนหรือหลังคลอดลูก

* **ຜູ້ອອກແຮງງານທີ່ເປັນຜູ້ຍິງທຸກຄົນ, ມີສິດ** ຖືກຕ້ອງຕາມກົດໝາຍທີ່ຈະເຮັດວຽກໃນຂະນະທີ່ຖືພາ ແລະ ໄດ້ຮັບ ການປົກປ້ອງເປັນພິເສດຈາກ ການທີ່ຈະຖືກປົດອອກຈາກວຽກຊຶ່ງເນື່ອງມາຈາກການຖືພາ.

* **แรงงานต่างด้าวที่เป็นหญิงทุกคนมีสิทธิ์ทำงานได้**ขณะตั้งท้องและมีสิทธิ์ได้รับความคุ้มครองจากการถูกเลิกจ้างเพราะการตั้งท้อง

## ໝາຍເຫດ ພິເສດສຳລັບຜູ້ອອກແຮງງານທີ່ເປັນໄວໜຸ່ມ:

## สิทธิ์สำหรับแรงงานต่างด้าวที่เป็นเยาวชน:

**ໝາຍເຫດ:** ເພາະວ່າໄວໜຸ່ມມີຄວາມສ່ຽງທີ່ຈະຕົກເປັນເຫຍື່ອຍຂອງການຄ້າມະນຸດ, ຂອງການຖືກຂູດຮີດທາງແຮງງານ ແລະ ທາງເພດ, ລັດຖະບານແຫ່ງລາ ຊະອານາຈັກໄທໄດ້ເຕືອນຜູ້ອອກແຮງງານເຄື່ອນຍ້າຍທີ່ມີອາຍຸຕ່ຳກວ່າ 18 ປີວ່າພວກເຂົາບໍ່ຄວນຈະເດີນທາງມາປະເທດໄທເພື່ອຊອກຫາວຽກເຮັດງານທຳ ຈົນກວ່າພວກເຂົາຈະມີພໍ່ແມ່ ຫຼື ຜູ້ປົກຄອງທີ່ <u>ຖືກຕ້ອງຕາມກົດໝາຍ</u>ຕິດຕາມມາ ( ບໍ່ແມ່ນມີພຽງແຕ່ມາກັບໝູ່ເທົ່ານັ້ນ ).

ກົດລະບຽບດັ່ງລຸ່ມນີ້ໃຊ້ສຳລັບການຈ້າງງານຂອງຜູ້ເຂົ້າເມືອງໄທທີ່ມີອາຍຸລະຫວ່າງ 15 ຫາ 17 ປີ

**หมายเหตุ:** เนื่องจากเยาวชนมีความเปราะบางต่อการถูกลักลอบค้ามนุษย์ การหาประโยชน์จากแรงงานและการหาประโยชน์ทางเพศ รัฐบาลไทยจึงออกคำเตือนว่าแรงงานต่างด้าวอายุต่ำกว่า 18 ปี ไม่ควรพยายามเดินทางมาหางานทำในประเทศไทย ยกเว้นแต่จะมากับผู้ปกครองหรือผู้ดูแล<u>ตามกฎหมาย</u>เท่านั้น (ไม่ใช่แค่เดินทางมากับคนรู้จักที่เป็นผู้ใหญ่)

หากจะจ้างแรงงานต่างด้าวอายุ 15 ถึง 17 ปี จะต้องปฏิบัติตามข้อบังคับดังต่อไปนี้:

* **ຜູ້ເຂົ້າເມືອງໄທເປັນເດັກຊຶ່ງມີອາຍຸຕ່ຳກວ່າ 15 ປີ ບໍ່ສາມາດເຮັດວຽກຢູ່ໃນປະເທດໄທໄດ້** ມີແຕ່ຜູ້ທີ່ມີ ອາຍຸສູງກວ່າ 15 ປີ ຈຶ່ງສາມາດເຮັດວຽກໄດ້ ແຕ່ຕ້ອງເຮັດຕາມເງື່ອນໄຂຕ່າງໆ ດັ່ງລຸ່ມນີ້ :

  * **แรงงานต่างด้าวที่มีอายุต่ำกว่า 15 ปีไม่สามารถทำงานได้ในประเทศไทย** แรงงานต่างด้าวที่มีอายุสูงกว่า 15 ปีสามารถทำงานได้ แต่มีข้อกำหนดพิเศษดังต่อไปนี้

* **ເມື່ອເດັກທີ່ມີອາຍຸລະຫວ່າງ 15 ຫາ 17 ປີ** ຖືກຈ້າງງານ, ນາຍຈ້າງຕ້ອງແຈ້ງຕໍ່ຫ້ອງການສະຫວັດດີການສັງຄົມ ແລະ ການປ້ອງກັນດ້ານແຮງງານທ້ອງຖິ່ນ ພາຍໃນ15 ວັນ ນັບຈາກວັນທີ່ບຸກຄົນດັ່ງກ່າວເລີ້ມເຮັດວຽກ.

  * **เมื่อจ้างเด็ก (เยาวชน) อายุระหว่าง 15 ถึง 17 ปีทำงาน** นายจ้างจะต้องไปแจ้งที่สำนักงานคุ้มครองแรงงานและสวัสดิการสังคมภายใน 15 วันนับจากวันที่แรงงานคนนั้นเริ่มทำงาน

*** ລູກຈ້າງທີ່ມີອາຍຸລະຫວ່າງ 15 ຫາ 17 ປີ** ຕ້ອງບໍ່ເຮັດວຽກເກີນວັນໜຶ່ງ 8 ຊົ່ວໂມງ ແລະ ບໍ່ເກີນ 40 ຊົ່ວໂມງຕໍ່ອາ ທິດ. ຜູ້ກ່ຽວມີສິດທີ່ຈະພັກຜ່ອນບໍ່ຕໍ່າກວ່າ 1 ຊົ່ວໂມງ ຕໍ່ມື້ ຫຼັງຈາກການເລີ້ມເຮັດວຽກບໍ່ໃຫ້ກາຍ 4 ຊົ່ວໂມງ (1 ຊົ່ວ ໂມງໄວກວ່າຜູ້ໃຫຍ່). ບຸກຄົນໃນກຸ່ມອາຍຸນີ້ບໍ່ໄດ້ຮັບອະນຸຍາດໃຫ້ເຮັດວຽກລ່ວງເວລາ ພວກເຂົາຍັງບໍ່ໄດ້ຮັບອະນຸ ຍາດໃຫ້ເຮັດວຽກໃນມື້ພັກ.

*** ลูกจ้างที่มีอายุระหว่าง 15 ถึง 17 ปี**จะต้องไม่ทำงานเกินวันละ 8 ชั่วโมงและไม่เกิน 40 ชั่วโมงต่ออาทิตย์ ลูกจ้างมีสิทธิ์ที่จะหยุดพักเป็นเวลาไม่น้อยกว่า 1 ชั่วโมงต่อเนื่องกันต่อวัน หลังจากทำงานมาติดต่อกันไม่เกิน 4 ชั่วโมง (ก่อนผู้ใหญ่ 1 ชั่วโมง) แรงงานที่มีอายุในช่วงนี้ไม่ได้รับอนุญาตให้ทำงานล่วงเวลาหรือทำงานในวันหยุดได้

*** ວຽກທີ່ອັນຕະລາຍ ແລະ ຕ້ອງຫ້າມ** ສຳລັບເດັກນ້ອຍລວມທັງໄວໜຸ່ມທີ່ຢູ່ໃນກຸ່ມອາຍຸດັ່ງກ່າວແມ່ນຕ້ອງຫ້າມ. ຊຶ່ງລວມມີການເຮັດວຽກທີ່ເລີກເດິກ ຫຼື ເຮັດວຽກໃນສະຖານທີ່ແອອັດ ຫຼື ໃກ້ກັບສະຖານທີ່ບັນເທີງຕ່າງໆທີ່ມີ ໂຮງ ຮຽນຕັ້ງຢູ່ ຫຼື ຢູ່ໃນສະພາບແວດລ້ອມທີ່ອາດຈະທຳລາຍສິນລະທຳຂອງພວກເຂົາ.

*** งานอันตรายและ/หรืองานต้องห้าม**ไม่อนุญาตให้เด็กทำและไม่อนุญาตให้เยาวชนที่มีอายุในช่วงนี้ทำด้วย งานดังกล่าวรวมถึง แต่ไม่จำกัดเฉพาะ การทำงานตอนกลางคืน หรือทำงานในสถานที่แคบ หรือทำงานในสถานบันเทิงซึ่งให้บริการเครื่องดื่มที่มีแอลกอฮอล์และ/หรือทำงานในสภาพแวดล้อมที่ขัดต่อศีลธรรมอันดีงาม

ໃນທຸກໆຂັ້ນອາຍຸຂອງຜູ້ເຂົ້າເມືອງໄທ, ໂດຍບໍ່ຄຳນຶງວ່າເຈົ້າ ໄດ້ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍໃນ ການເຮັດວຽກ, ເຈົ້າມີສິດທີ່ຈະຮຽກຮ້ອງແລະຫາວິທີການປ້ອງກັນ,ຖ້າຫາກ:

* **ສິດທິຕ່າງໆທີ່ກ່າວມາຂ້າງເທິງນີ້ຖືກລະເມີດ** ຈາກນາຍຈ້າງຂອງເຈົ້າ.

* **ເຈົ້າຖືກປົດອອກຈາກວຽກຢ່າງບໍ່ເປັນທຳ** ຫຼື ນາຍຈ້າງບໍ່ຈ່າຍຄ່າຈ້າງ.

* **ເຈົ້າຖືກລວນລາມທາງເພດ ຫຼື ຖືກທຳຮ້າຍທາງຮ່າງກາຍ** ໂດຍນາຍຈ້າງ, ຫົວໜ້າ ຫຼື ຜູ້ດູແລຕ່າງໆ. ການທຳ ຮ້າຍຮ່າງກາຍ ແລະ ການລວນລາມທາງເພດ ແມ່ນເປັນການກະທຳທີ່ຜິດກົດໝາຍ.

* **ບັດປະຈຳຕົວ ຫຼື ເອກະສານຕ່າງໆຂອງເຈົ້າຖືກຍຶດ** ໂດຍນາຍຈ້າງ

* **ນາຍຈ້າງ ຫຼື ບຸກຄົນທີ່ເຮັດວຽກໃຫ້ນາຍຈ້າງຂອງເຈົ້າໄດ້ ບັງຄັບໃຫ້ເຈົ້າ**ເຮັດວຽກ ຫຼື ບໍ່ໃຫ້ອອກຈາກສະຖານທີ່ເຮັດວຽກໃນເວລາຫວ່າງ

**ສຳລັບຂໍ້ຄວາມຊ່ວຍເຫຼືອທີ່ກ່ຽວກັບການອະນຸຍາດເຮັດວຽກ, ການລົງທະບຽນ ແລະ ການລວງລະເມີດສັນຍາ ຕ່າງໆ ໂທ 1506** (ໂທຟອດຫຼຽນ/ໂທມືຖື) ຢູ່ພາຍໃນປະເທດໄທເທົ່ານັ້ນ.

**ຖ້າເຈົ້າກຳລັງຕົກຢູ່ໃນອັນຕະລາຍໂທ 1300** (ໂທຟອດຫຼຽນ/ໂທມືຖື) ຢູ່ພາຍໃນປະເທດໄທເທົ່ານັ້ນ. (ບໍ່ຕ້ອງຫ່ວງຕໍ່ສະຖານະພາບທີ່ຖືກກົດໝາຍ ຫຼື ການຂຶ້ນທະບຽນຂອງເຈົ້າ, ຖ້າເຈົ້າຕົກຢູ່ໃນອັນຕະລາຍເຈົ້າຈະໄດ້ຮັບ ຄວາມຊ່ວຍເຫຼືອສະເໝີ) ສຳລັບການຊ່ວຍເຫຼືອອື່ນໆ, ໃຫ້ເບິ່ງໃນໜ້າສຸດທ້າຍຂອງປື້ມຫົວນີ້.

## *ປະກັນສຸຂະພາບ ແລະ ການດູແລສຸຂະພາບ:*

ຢູ່ໃນປະເທດໄທ, ຜູ້ອອກແຮງງານທີ່ໄດ້ລົງທະບຽນແລ້ວ ແມ່ນໄດ້ຮັບການປະກັນສຸຂະພາບໂດຍອັດຕະໂນມັດ.

ໂດຍການສະແດງບັດປະຈຳຕົວຕ່າງດ້າວ ແລະ ບັດປະກັນສຸຂະພາບຕໍ່ທາງໂຮງໝໍ, ເຈົ້າກໍ່ຈະໄດ້ຮັບສິດໃນການຮັກສາ, ໂດຍທີ່ບໍ່ຕ້ອງເສຍຄ່າໃຊ້ຈ່າຍໃດໆ, ມີບັດປະກັນສຸຂະພາບ, ເຈົ້າກໍ່ຈະມີສິດກວດ

ສຸຂະພາບ, ຮັບການຮັກສາ ແລະ ການບຳບັດຟື້ນຟູຕ່າງໆ. ສ່ວນການດູແລຮັກສາແຂ້ວ ແລະ ດູແລຜູ້ປ່ວຍກໍ່ນອນຢູ່ໃນນະໂຍບາຍປະກັນສຸຂະພາບນີ້.

ເຈົ້າຈະຕ້ອງໄປໂຮງໝໍທີ່ຮ່ວມມື ໃນແຜນຂອງການປະກັນສຸຂະພາບ, ສ່ວນໃຫຍ່ແມ່ນໂຮງໝໍແຫ່ງດຽວກັນກັບທີ່ເຈົ້າ ໄປກວດສຸຂະພາບ ແລະ ເຮັດປະກັນໄພສຸຂະພາບເມື່ອເຈົ້າຈະເລີ່ມວຽກໃໝ່. ໃນກໍລະນີເກີດອຸປະຕິເຫດ, ເຈົ້າຕ້ອງ ໄດ້ຮັບການຮັກສາຈາກໂຮງໝໍທີ່ໃກ້ທີ່ສຸດ.

## *ຂໍ້ຄວນລະວັງອື່ນໆ*

### (ນະໂຍບາຍຂອງລັດຖະບານແຫ່ງລາຊະອານາຈັກໄທ)

ພາຍໃຕ້ກົດໝາຍແຫ່ງປະເທດໄທ, ຜູ້ແຮງງານຈະຕ້ອງເດີນທາງຢູ່ແຕ່ພາຍໃນແຂວງ ທີ່ເຂົາເຈົ້າລົງທະບຽນເທົ່ານັ້ນ. ຖ້າຫາກຝ່າຝືນຕໍ່ລະບຽບນີ້, ທາງລັດຖະບານໄທຈະຖອນໃບອະນຸຍາດພັກເຊົາ ແລະ ໃບອະນຸຍາດເຮັດວຽກຢູ່ໃນປະ ເທດໄທທັນທີ ແລະ ພວກເຂົາຈະສົ່ງເຈົ້າກັບບ້ານ. (ສ່ວນແຮງງານຊາວປະມົງ ແລະ ຜູ້ອອກແຮງງານຂົນສົ່ງທາງນໍ້າອາດຈະ ຕ້ອງເດີນທາງອອກນອກພື້ນທີ່ທີ່ເຂົາເຈົ້າລົງທະບຽນ, ແຕ່ວ່າພວກເຂົາຕ້ອງເດີນທາງດ້ວຍເຮືອເທົ່ານັ້ນ ແລະ ຕ້ອງຢູ່ໃນບໍລິເວນທ່າຈອດເຮືອເທົ່ານັ້ນ). ສ່ວນຜູ້ອອກແຮງງານພາຍໃນອາດຈະຕ້ອງເດີນທາງໄປແຂວງອື່ນ ແຕ່ຕ້ອງຢູ່ໃນບໍລິສັດຂອງນາຍຈ້າງ ຫຼື ຄອບຄົວຂອງນາຍຈ້າງເທົ່ານັ້ນ. ຜູ້ອອກແຮງງານຕ້ອງສະແດງ ບັດປະຈຳຕົວຕໍ່ເຈົ້າໜ້າທີ່ເມື່ອຖືກເຈົ້າໜ້າທີ່ສອບຖາມ.

## ຂໍ້ຄິດສຸດທ້າຍ

ໃນບໍ່ດົນມານີ້ໄດ້ມີຄວາມພະຍາຍາມທີ່ຈະປັບປຸງປ່ຽນແປງການເຮັດວຽກຕ່າງໆຢູ່ຂັ້ນທ້ອງຖິ່ນຢູ່ແຂວງຕ່າງໆ ແລະ ພາຍໃນປະເທດ ຂອງເຈົ້າ ເພື່ອຊ່ວຍປ້ອງກັນ ການຂູດຮີດແຮງງານ ແລະ ການຄ້າມະນຸດ, ເຈົ້າໄດ້ຊອກ ຮູ້ບໍ່ວ່າ ມີໂຄງການເຫຼົ່ານີ້ຢູ່ໃກ້ໆກັບບ້ານ ຊຶ່ງເຈົ້າສາມາດຂໍຂໍ້ມູນຕ່າງໆກັບໜ່ວຍງານ, ອົງການທີ່ໃຫ້ປື້ມຫົວນີ້ແກ່ ເຈົ້າ.
ຈົ່ງຄິດສະເໝີວ່າ: "ຢູ່ກັບຄອບຄົວຂອງເຈົ້າ ແລະ ເຮັດວຽກຢູ່ບ້ານເກີດເມືອງນອນຂອງເຈົ້າຈະເຮັດໃຫ້ເຈົ້າມີຄວາມສຸກກວ່າທີ່ ເຈົ້າຈະໄປສ່ຽງ ຊີວິດທີ່ລຳບາກຢູ່ຕ່າງປະເທດ". ນີ້ເປັນສິ່ງທີ່ມີຄ່າທີ່ສຸດທີ່ເຈົ້າຄິດຢ່າງຮອບຄອບ.

**ການໃຫ້ຄວາມຊ່ວຍເຫຼືອ:**

**ຖ້າເຈົ້າຕ້ອງການຄວາມຊ່ວຍເຫຼືອໃນເວລາເດີນທາງ ແລະ ເຮັດວຽກຢູ່ປະເທດໄທ ໃຫ້ຕິດຕໍ່ພົວພັນກັບໜ່ວຍງານຕ່າງໆດັ່ງນີ້ :**

**ຕໍາຫຼວດ: 191** (ສະເພາະຢູ່ໃນໄທເທົ່ານັ້ນ ໂທຢອດຫຼຽນ ຫຼື ໂທມືຖື)

**ຕໍາຫຼວດທ່ອງທ່ຽວ: 1155** (ເປັນພາສາໄທ ແລະ ພາສາອັງກິດ)

**ເພື່ອຂໍຄວາມຊວ່ຍເຫຼືອກ່ຽວກັບການລະເມີດສັນຍາ ໂທ 1506** ສະເພາະໃນປະເທດໄທ ເທົ່ານັ້ນ.

**ຖ້າທ່ານກໍາລັງຕົກຢູ່ໃນອັນຕະລາຍໂທ 1300** ສະເພາະໃນປະເທດໄທເທົ່ານັ້ນ
(ບໍ່ຕ້ອງຫ່ວງຕໍ່ສະຖານະພາບທີ່ຖືກກົດໝາຍ ຫຼື ການຂຶ້ນທະບຽນຂອງເຈົ້າ, ຖ້າເຈົ້າຕົກຢູ່ໃນອັນຕະລາຍ ເຈົ້າຈະໄດ້ຮັບຄວາມຊ່ວຍເຫຼືອສະເໝີ)

**ກົງສູນລາວທີ່ບາງກອກ:**
02 539 6667- 8 ຕໍ່ 109

**ກົງສູນກໍາປູເຈຍທີ່ບາງກອກ:**
02 957 5851-2 ໂມງລັດຖະການ ( ວັນຈັນ - ວັນສຸກ )
081 826 8551 (ຫຼັງຈາກໂມງລັດຖະການ ແລະ ວັນຢຸດເສົາອາທິດ)

**ສໍາລັບສັນຊາດພະມ້າ:**

- ເຄືອຂ່າຍສົ່ງເສີມສິດທິແຮງງານ (LPN): 034 434 726-7
- TACDB: 02 216 4463 (ຢູ່ບາງກອກ - ແຕ່ກໍ່ໃຫ້ການຊ່ວຍເຫຼືອໃນຂົງເຂດອື່ນເຊັ່ນກັນ)
  ເວລາ: 09:00 – 18:00 ພະນັກງານສາມາດເວົ້າພາສາພະມ້າໄດ້.

ອົງການທີ່ໃຫ້ປື້ມຫົວນີ້ແກ່ເຈົ້າສາມາດໃຫ້ຄໍາແນະນໍາ ຫຼື ໃຫ້ຄວາມຊ່ວຍເຫຼືອແກ່ເຈົ້າໄດ້
ປື້ມຫົວນີ້ແມ່ນເປັນສ່ວນໜຶ່ງຂອງການໂຄສະນາເດີນທາງແບບສະຫຼາດ - ເຮັດວຽກແບບສະຫຼາດ
ແລະເປັນການລິເລີ່ມໂຄງການເຂດລຸ່ມແມ່ນໍ້າຂອງຫ້ອງການແຮງງານສາກົນ
ເພື່ອຕ້ານ ການຄ້າມະນຸດຢູ່ໃນເດັກ ແລະ ແມ່ຍິງ

*ວຽກງານສິນຕ່າງໆ ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການ ILO CP-TING ທີ່ປັກກິ່ງ, ສາທາລະນະລັດ ປະຊາຊົນຈີນ*

## ກຳລັງເຮັດວຽກຢູ່ປະເທດໄທ ຫຼື ກຳລັງຊອກຫາວຽກຢູ່?

ເຈົ້າເຄີຍມາໄທເພື່ອຊອກຫາວຽກບໍ ?
ເຈົ້າໄດ້ເຮັດວຽກຢູ່ປະເທດໄທເປັນທີ່ຮຽບຮ້ອຍແລ້ວບໍ ?

## ເຈົ້າມີສິດ – ແລະ ຄວາມຮັບຜິດຊອບ!

ຈົ່ງຮັບຮູ້ໄວ້ວ່າສິ່ງຕ່າງໆເຫຼົ່ານີ້ສາມາດຊ່ວຍເຈົ້າໃຫ້ຫຼີກລ້ຽງຈາກການທາລຸນ ແລະ ຊ່ວຍໃຫ້ເຈົ້າໄດ້ຮັບຜົນປະໂຫຍດຈາກການເຮັດວຽກ.

## *ບໍ່ຕ້ອງຢ້ານ – ແຕ່ຈົ່ງຮູ້!*

ປື້ມເຫຼັ້ມນີ້ໃຫ້ຄຳແນະນຳເຈົ້າວ່າ ຈະເຮັດວຽກ ແລະ ເດີນທາງແນວໃດໃຫ້ປອດໄພຢູ່ໃນປະເທດໄທ, ຈະຫຼີກລ້ຽງຈາກນາຍຈ້າງ ແລະ ຕົວແທນທີ່ທາລຸນໄດ້ແນວໃດ ? ແລະ ເມື່ອຕ້ອງການຄວາມຊ່ວຍເຫຼືອຕ້ອງໄປໃສ?

## ຍັງບໍ່ທັນຊ້າເກີນໄປ - ເຖິງແມ່ນວ່າ ເຈົ້າກຳລັງປະເຊີນກັບບັນຫາການທາລຸນຢູ່ກໍ່ຕາມ!

## *ເດີນທາງແບບສະຫຼາດ - ເຮັດວຽກແບບສະຫຼາດ!*

ຄູ່ມືນີ້ແມ່ນແຈກຟຣີສຳລັບຜູ້ອົບພະຍົບໂດຍຜ່ານຜູ້ຮ່ວມໂຄງການຕ່າງໆລຸ່ມນີ້:

www.childtrafficking.net

**Copyright © International Labour Organization 2007**

ISBN: 978-92-2-815806-5 (print)
978-92-2-819809-6 (web-pdf)